# ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ

**ຂ້າພະເຈົ້າຈະເຮັດການສົ່ງຕໍ່ໄປຫາຄະນະທີມງານຂອງທ່ານແນວໃດ?**

ສິ່ງທັງຫມົດທີ່ພວກເຮົາຕ້ອງການແມ່ນອີເມລ໌ຫລື ເລກສົ່ງຄວາມໄວ້ທີ່ມີ:

- ຊື່ແລະວັນເກີດຂອງຜູ້ອາສັຍຢູ່.
- ຊື່ຂອງສະຖານທີ່ປິ່ນປົວແລະຄົນຕິດຕໍ່ຫາ,ພ້ອມດ້ວຍອີເມລ໌/ເລກໂທຣະສັບ.
- ການອະທິບາຍດ້ວຍສັ້ນໆກ່ຽວກັບບັນຫານຳການປະພຶດ.
- ຖ້າຫາກວ່າທ່ານສົ່ງຕໍ່ໄປຫາໃນນາມຂອງສະຖານທີ່ປິ່ນປົວ, ພວກເຮົາຕ້ອງການສິ່ງຊື່ບອກວ່າທ່ານໄດ້ເວົ້າ ລົມນຳເຂົາເຈົ້າກ່ຽວກັບການທຳການສົ່ງຕໍ່ແລະວ່າ ເຂົາເຈົ້າໄດ້ເຫັນພ້ອມນຳທີ່ຈະຮັບເອົາໂທຣະສັບຈາກພວກເຮົາ.

**ທ່ານເອົາການໃຫ້ຄຳປຶກສາເຣື່ອງສຸຂະພາບໂຣກຈິດໃຫ້ຜູ້ອາສັຍຢູ່ບໍ່?**

ບໍ່,ອັນນີ້ແມ່ນຢູ່ຂ້າງນອກຂອງພາລະຫນ້າທີ່ຂອງຄະ ນະທີມງານຂອງພວກເຮົາ.ພວກເຮົາເຮັດວຽກນຳສະຖານທີ່ປິ່ນປົວ - ບໍ່ແມ່ນຜູ້ອາສັຍຢູ່.ເຖິງຢ່າງໃດກໍຕາມ,ຖ້າຫາກວ່າການປິ່ນປົວສຸຂະພາບໂຣກຈິດແມ່ນຕ້ອງການ,ພວກເຮົາຍິນດີທີ່ຈະຊ່ວຍເຫລືອທ່ານຊອກ ຫາແຫລ່ງຊ່ວຍເຫລືອທ້ອງຖິ່ນເພື່ອຈະຕອບສະນອງຄວາມຕ້ອງການນັ້ນ.

**ຜູ້ອາສັຍຢູ່ຕ້ອງໄດ້ຮັບ Medicaid, ບໍ່,ຫລືສະຖານທີ່ປິ່ນປົວຕ້ອງຮັບເອົາ Medicaid ບໍ່ເພື່ອວ່າທ່ານຈະຊ່ວຍເຫລືອໄດ້?**

ບໍ່ແມ່ນ! ຖ້າຫາກວ່າສະຖານທີ່ປິ່ນປົວແມ່ນເຮືອນ ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງ,ສະຖານທີ່ດຳຣົງ ຊີວິດທີ່ຖືກຊ່ວຍເຫລືອ,ເຮືອນຄອບຄົວຜູ້ໃຫຍ່ຫລືເຮືອນດຳຣົງຊີວິດທີ່ຖືກຊ່ວຍເຫລືອທີ່ຖືກອະນຸຍາດຫລືຢັ້ງຢືນໂດຍ RCS ມັນເປັນການສົ່ງຕໍ່ທີ່ພວກເຮົາສາມາດຮັບເອົາໄດ້!

**ຣາຍຣະອຽດທີ່ທ່ານເອົາໃຫ້ຖືກຮັບປະກັນວ່າເປັນ ‘ການປັບໄຫມບໍ່ໄດ້?’**

ພວກເຮົາບໍ່ສາມາດຮັບປະກັນອັນນີ້ໄດ້,ຍ້ອນວ່າມັນມີຫລາຍຂໍ້ມູນຄວາມຈິງຫລາຍເກີນໄປທີ່ສະທ້ອນເຖິງສະພາບການແຕ່ລະເທື່ອ.ເຖິງຢ່າງໃດກໍຕາມ,ກະຣຸນາຮັບຮູ້ວ່າພວກເຮົາເຮັດວຽກຫນັກເພື່ອຈະຮັບປະກັນວ່າຣາຍຣະອຽດທີ່ພວກເຮົາເອົາໃຫ້ຖືກຕ້ອງກົງກັນກັບກົດຣະບຽບ. ອັນນີ້ລວມເອົາການເຮັດວຽກນຳພະນັກງານນະໂຍບາຍຂອງ RCS ແລະຜູ້ຊ່ຽວຊານແຕ່ລະເຣື່ອງຄົນອື່ນໆຕາມທີ່ຕ້ອງການ.



# ເພື່ອຣາຍຣະອຽດເພີ້ມເຕີມຫລືເພື່ອຈະເຮັດການສົ່ງຕໍ່,ຕິດຕໍ່ຫາພວກເຮົາໄດ້ທີ່:

**RCSBHST@dshs.wa.gov**
(ການສອບຖາມທົ່ວໄປ)

**ALTSABHSTTRAINING@dshs.wa.gov**
(ການສອບຖາມເຣື່ອງການຝຶກຝົນ)

**360-725-3445**

**ແວບໄຊທ໌**
ສະແກນ QR ໂຄດເພື່ອຈະເຂົ້າຫາ

Residential Care Services
P.O. Box 45600
Olympia, WA 98504-5600

**ຜູ້ໃຫ້ການບໍຣິການເວົ້າວ່າ:**

"[ຜູ້ໃຫ້ຄຳປຶກສາ] ໄດ້ຟັງຄວາມຫ່ວງໄຍຂອງຂ້ອຍແລະ ເຮັດໃຫ້ຂ້ອຍມີຕາສະຫວ່າງຂຶ້ນດ້ວຍແນວຄິດທີ່ດີ"

"ຂ້ອຍຮູ້ສຶກວ່າຖືກຮັບຮູ້ກ່ຽວກັບບັນຫາທີ່ພວກເຮົາກຳລັງປະເຊີນຫນ້າຢູ່ນຳຜູ້ອາສັຍຢູ່."

"ຂ້ອຍຮູ້ຈັກວ່າການອູ້ມຊູຈະມີໄວ້ໃຫ້ຢູ່ສະເມີແລະມີໄວ້ໃຫ້ພຽງແຕ່ການໂທຣະສັບໄປຫາເທົ່ານັ້ນ."

Department of Social and Health Services
AGING AND LONG-TERM SUPPORT ADMINISTRATION
Residential Care Services

# ຄະນະທີມງານອູ້ມຊູສຸຂະພາບການປະພຶດ



## ການບໍຣິການສຳລັບຜູ້ໃຫ້ການເບິ່ງແຍງດູແລຣະຍະຍາວ

Washington State Department of Social & Health Services
*Transforming lives*

DSHS 22-1940 LA (7/23) Laotian

# ກ່ຽວກັບ BHST

ໃນຖານະເປັນພາກສ່ວນນຶ່ງຂອງຄວາມພະຍາຍາມຂອງຣັດວໍຊິງຕັນທີ່ຈະດັດແປງຊີວິດແລະເພີ້ມການບໍຣິການຢູ່ຕາມຊຸມຊົນທີ່ມີໄວ້ຢູ່ຊື້ນໃຫ້ແກ່ລູກຄ້າສຸຂະພາບການປະພຶດ,ການບໍຣິການປິ່ນປົວຢູ່ຕາມບ່ອນຢູ່ອາສັຍໄດ້ເຮັດຄະນະທີມງານອູ້ມຊູສຸຂະພາບການປະ ພຶດຂື້ນມາ.

ຈຸດປະສົງຕົ້ນຕໍຂອງ RCS BHST ແມ່ນຄວາມສໍາເຣັດຣະຍະຍາວສໍາລັບບຸກຄົນທີ່ມີບັນຫານໍາການປະພຶດຜູ້ທີ່ອາສັຍຢູ່ໃນສະພາບແວດລ້ອມຣະຍະຍາວແລະຢູ່ຕາມຊຸມຊົນ.ເພື່ອຈະບັນລຸຜົນສໍາເຣັດອັນນີ້,BHST ສະເນີຄວາມຊ່ຽວຊານທາງການແພດແລະກົດຣະບຽບໃຫ້ແກ່ພະນັກງານເພື່ອຈະຊ່ວຍເຫລືອເຂົາເຈົ້າໃຫ້ເອົາການເບິ່ງແຍງດູແລທີ່ມີຄຸນນະພາບສູງ,ມຸ່ງໃສ່ບຸກຄົນໃນຂະນະທີ່ຍັງປະຕິບັດຕາມກົດຣະບຽບຢູ່.

ການບໍຣິການຕາມສະມັກໃຈ,ໂດຍບໍ່ຄິດຄ່າຂອງພວກເຮົາມີໄວ້ໃຫ້ທົ່ວຣັດ.ເຖິງແມ່ນວ່າພວກເຮົາຈະເປັນພາກສ່ວນນຶ່ງຂອງ RCS, ພວກເຮົາບໍ່ແມ່ນນັກສືບສວນເຣື່ອງການປະຕິບັດຕາມ,ຜູ້ສໍາຣວດຫລືຜູ້ອອກໃບອະນຸຍາດ.




# ການບໍຣິການຂອງພວກເຮົາ



### ການໃຫ້ຄໍາປຶກສາ

ການໃຫ້ຄໍາປຶກສາອັນເຈາະຈົງສໍາລັບຜູ້ອາສັຍຢູ່ທີ່ປະສົມປະສານສຸຂະພາບການປະພຶດແລະຄວາມຊ່ຽວຊານທາງກົດຣະບຽບເພື່ອຈະເອົາໃຫ້ຜູ້ໃຫ້ການບໍຣິການທົ່ມທາງໃຫມ່ເພື່ອຈະເບິ່ງແຍງດູແລຜູ້ອາສັຍຢູ່ທີ່ເປັນບັນຫາ.

### ຄວາມຊ່ວຍເຫລືອທາງດ້ານເທັກນິກເບື້ອງຕົ້ນ

ຊະນິດຂອງການໃຫ້ຄໍາປຶກສາທີ່ມີຈຸດປະສົງເພື່ອຈະ ຊ່ວຍເຫລືອຜູ້ໃຫ້ການບໍຣິການທີ່ຈະເພີ້ມຂື້ນຄວາມ ເຂົ້າໃຈຂອງເຂົາເຈົ້າໃນກົດຣະບຽບແລະການເຂົ້າແຊກແຊງນໍາໃນເວລາເຂົາເຈົ້າຈັດຕຽມເພື່ອຈະເອົາບຸກຄົນເຂົ້າປິ່ນປົວຜູ້ທີ່ມີປະວັດການປະພຶດທີ່ເປັນບັນຫາທີ່ຮູ້ຈັກແລ້ວ.



### ການຝຶກຝົນ

ຜູ້ຊ່ຽວຊານການຝຶກຝົນຂອງ BHST ມີການປະສົມ ປະສານສຸຂະພາບການປະພຶດແລະຄວາມຊ່ຽວຊານທາງກົດຣະ ບຽບໂດຍສະເພາະ.ໃນການຝຶກຝົນ 1-2 ຊົ່ວໂມງແຕ່ລະເທື່ອ, ທ່ານຈະຮຽນຮູ້ເທັກນິກແລະຍຸດທະວິທີເພື່ອຈະຕອບຄືນຢ່າງເປັນຜົນດີຕໍ່ການປະພຶດ ທີ່ເປັນບັນຫາໃນຂະນະທີ່ຍັງປະຕິບັດຕາມ WACs.

### ສະພາກາເຟ

ການປະຊຸມກັນເຣື່ອງຄໍາຖາມແລະຄໍາຕອບທີ່ບໍ່ເປັນທາງການນໍາຜູ້ໃຫ້ຄໍາປຶກສາທີ່ບໍ່ໄດ້ມຸ່ງເປົ້າຫມາຍໃສ່ ຜູ້ອາສັຍຢູ່ຄົນເຈາະຈົງ.ຖາມພວກເຮົາທຸກໆຢ່າງກ່ຽວ ກັບອຸບປະສັກນໍາການປະພຶດ, ການວາງແຜນເຣື່ອງການເບິ່ງແຍງດູແລ, WACs, ແລະບໍ່ວ່າແນວໃດອີກທີ່ເຂົ້າມາໃນໃຈ!



### ບໍ່ພົບເຫັນສິ່ງທີ່ທ່ານຊອກຫາ?

ບາງຄັ້ງບາງຄາວພວກເຮົາຈະຕື່ມການບໍຣິການໃຫມ່ເພື່ອຈະຕອບສະນອງຕໍ່ຄວາມຕ້ອງການທີ່ກໍາລັງປ່ຽນແປງຂອງຜູ້ໃຫ້ການບໍຣິການ.ສົ່ງອີແມລ໌ມາໃຫ້ພວກເຮົາ ແລະພວກເຮົາຈະເຮັດວຽກນໍາທ່ານເພື່ອຈະພິຈາຣະນາເບິ່ງທົ່ມທາງແກ້ໄຂສໍາລັບສະພາບການຂອງທ່ານ.

# ພົບກັບທີມງານ

ຄູຝຶກສອນແລະຜູ້ໃຫ້ຄໍາປຶກສາຂອງພວກເຮົາລວມເອົາພະນັກງານສັງຄົມທີ່ມີໃບອະນຸຍາດ,ຜູ້ໃຫ້ຄໍາປຶກສາສຸຂະພາບໂຣກຈິດທີ່ມີໃບອະນຸຍາດແລະຄົນອື່ນໆອີກ – ທີ່ມີປະສົບປະການນໍາການເຮັດວຽກຢູ່ Western State Hospital, ສູນກາງ Special Commitment Center ຢູ່ McNeil Island, ຫ້ອງການສຸຂະພາບໂຣກຈິດໃນຊຸມຊົນ, Home and Community Services, ສານທ້ອງຖິ່ນແລະຫນ່ວຍພາວະສຸກເສີນສຸຂະພາບການປະພຶດ.

## ຜູ້ປຶກສາ



Melissa Thomas, MS, LMHCA
melissa.thomas@dshs.wa.gov



Jean Horton, LMHC, GMHS
jeannette.horton@dshs.wa.gov



Julie Olivier
julie.olivier1@dshs.wa.gov



Valerie Turrentine, MPA
valerie.turrentine@dshs.wa.gov



Andy Cochran
andrew.cochran@dshs.wa.gov



Nicole Moon
nicole.moon@dshs.wa.gov

## ຜູ້ຈັດການຫນ່ວຍ



Alixandria Cortez, MAP
alixandria.cortez@dshs.wa.gov

## ຄູຝຶກສອນ



Krystle Malo